# ບົດທີ 5

# ການວັດ ແລະ ປະເມີນຜົນ ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ປີທີ 5

**ໃຫ້ນັກສຶກສາອ່ານຂໍ້ຄວາມລຸ່ມນີ້ ແລະ ໝາຍເອົາຄໍາຕອບທີ່ຖືກຕ້ອງພຽງຂໍ້ດຽວ ແລ້ວຕອບຖາມທີ່ມີຢູ່**

| |
|---|
| 1. ຄວາມສໍາຄັນຂອງການວັດ ແລະ ປະເມີນຜົນ |
| ການວັດ ແລະ ປະເມີນຜົນ ແມ່ນເປັນສິ່ງທີ່ສໍາຄັນ ເພາະມັນໄດ້ຊ່ວຍໃຫ້ຄູສອນຮູ້ວ່າ ນັກຮຽນໄດ້ຮຽນຮູ້ຫຍັງ ແລະ ສາມາດນໍາໃຊ້ໄດ້ຫຼາຍປານໃດ. ການວັດ ແລະ ປະເມີນຜົນບໍ່ເກີດຂຶ້ນໂດຍພຽງແຕ່ໃນຕອນທ້າຍຂອງບົດຮຽນ ແຕ່ຄວນມີບາງສິ່ງບາງຢ່າງທີ່ຄູສາມາດເຮັດຕະຫຼອດການສອນ. ການປະເມີນແມ່ນປະດອບມີຫຼາຍກວ່າການໃຫ້ນັກຮຽນໃສ່ເຈ້ຍ. ການປະເມີນແມ່ນຍັງປະກອບມີ:<br>➢ ການຕັ້ງຄໍາຖາມ ຖາມນັກຮຽນໃນຕອນຕົ້ນຂອງບົດຮຽນ ເພື່ອຮູ້ໄດ້ວ່າ ພວກເຂົາໄດ້ຮູ້ຫຍັງແດ່ແລ້ວກ່ຽວກັບຫົວຂໍ້.<br>➢ ຕັ້ງຄໍາຖາມ ຖາມນັກຮຽນໃນຕອນກາງຂອງບົດຮຽນ ເພື່ອກວດຄືນວ່າ ນັກຮຽນນັ້ນໄດ້ເຂົ້າໃຈຄູບໍ, ການໃຫ້ການຕິດຕາມນັກຮຽນໃນເວລາທີ່ພວກເຂົາເຮັດວຽກເປັນລາຍບຸກຄົນ, ເຮັດວຽກເປັນຄູ່ ຫຼື ເປັນກຸ່ມ ເພື່ອກວດຄືນວ່າ ພວກເຂົາສາມາດເຮັດໄດ້ດ້ວຍຕົວຂອງເຂົາເຈົ້າເອງ ຫຼື ວ່າ ພວກເຂົາຕ້ອງຄວາມຊ່ວຍເຫຼືອຈາກຄູສອນ.<br>➢ ສັງເກດນັກຮຽນໃນເວລາທີ່ພວກເຂົາເຮັດກິດຈະກໍາໃນຕອນທ້າຍຂອງບົດຮຽນ ເພື່ອກວດເບິ່ງວ່າພວກເຂົາສາມາດນໍາເອົາສິ່ງທີ່ພວກເຂົາໄດ້ຮຽນຮູ້ນັ້ນໄປໃຊ້ໄດ້ແນວໃດ ແລະ ໃຫ້ຄະແນນພວກເຂົາຕາມເກນການໃຫ້ຄະແນນ. |
| ຄູສອນຄວນ:<br>a. ວັດ ແລະ ປະເມີນນັກຮຽນໃນຕອນທ້າຍຂອງບົດຮຽນ.<br>b. ສືບຕໍ່ວັດ ແລະ ປະເມີນນັກຮຽນຕະຫຼອດການສອນ. |
| ນັກສຶກສາພາກັນຕອບຄໍາຖາມໃນຂໍ້ລຸ່ມນີ້:<br>1. ຄວາມສໍາຄັນຂອງການວັດ ແລະ ປະເມີນຜົນ<br>➢ ເປັນຫຍັງການວັດ ແລະ ປະເມີນຜົນຈິ່ງມີຄວາມສໍາຄັນ ?<br><br><br>➢ ການວັດ ແລະ ປະເມີນຜົນປະກອບມີຫຍັງແດ່ ? |
| 2. ການປະເມີນຜົນເພື່ອປັບປຸງການຮຽນໃນຫຼັກສູດປະຖົມສຶກສາ ສະບັບປັບປຸງໃໝ່ |
| ການປະເມີນເພື່ອປັບປຸງການຮຽນຊ່ວຍໃຫ້ຄູສອນກວດຄືນໄດ້ຄວາມກ້າວໜ້າການຮຽນຮູ້ຂອງນັກຮຽນ ແລະ ສາມາດລະບຸໄດ້ວ່າ ນັກຮຽນຕ້ອງການ ການຊ່ວຍເຫຼືອຢູ່ຈຸດໃດ ເພື່ອບັນລຸໄດ້ຈຸດປະສົງຂອງບົດຮຽນ. ຄູສອນຄວນສືບຕໍ່ການປະເມີນເພື່ອປັບປຸງການຮຽນຕະຫຼອດການສອນ ເຊິ່ງຈຸດນີ້ອາດຈະປະກອບດ້ວຍ:<br>➢ ການຕິດຕາມນັກຮຽນໃນເວລາດໍາເນີນກິດຈະກໍາ. |

- ຖາມ ຄຳຖາມນັກຮຽນເພື່ອກວດຄືນວ່າພວກເຂົາຮູ້ຫຍັງແດ່.
- ໃຫ້ນັກຮຽນສະທ້ອນຄືນຕໍ່ການຮຽນຮູ້ຂອງຕົນ.

ມັນເປັນສິ່ງທີ່ສຳຄັນສຳລັບຄູ ບໍ່ພຽງແຕ່ຈະດຳເນີນການປະເມີນເພື່ອປັບປຸງການຮຽນ ແຕ່ຍັງຕິດຕາມຈຸດນີ້. ໝາຍຄວາມວ່າການໃຫ້ການຊ່ວຍເຫຼືອນັກຮຽນເພີ່ມເຕີມກັບຜູ້ທີ່ຕ້ອງການ ການຊ່ວຍເຫຼືອ ຕ້ອງຮັບປະກັນວ່ານັກຮຽນທັງໝົດສາມາດບັນລຸໄດ້ຈຸດປະສົງຂອງບົດຮຽນ. ທຸກໆເນື້ອໃນບົດຮຽນທີ່ຢູ່ໃນປຶ້ມຄູ່ມືຄູປະກອບມີກ່ອງການວັດ ແລະ ປະເມີນຜົນ ເຊິ່ງຊີ້ໃຫ້ຄູຮູ້ວ່າ ຄູສາມາດດຳເນີນການປະເມີນເພື່ອປັບປຸງການຮຽນໃນຕອນໃດ. ຄຳແນະນຳກ່ຽວກັບການປະເມີນເພື່ອປັບປຸງການຮຽນແມ່ນໄດ້ອະທິບາຍໄວ້ໃນກ່ອງນັ້ນ.

ການປະເມີນເພື່ອປັບປຸງການຮຽນຊ່ວຍໃຫ້ຄູສອນ:

a. ຮູ້ໄດ້ວ່າ ນັກຮຽນຄົນໃດທີ່ບັນລຸຈຸດປະສົງຂອງບົດຮຽນ.
b. ຮູ້ໄດ້ວ່າ ນັກຮຽນຄົນໃດທີ່ຕ້ອງການ ການຊ່ວຍເພື່ອບັນລຸຈຸດປະສົງຂອງບົດຮຽນ .

ນັກສຶກສາພາກັນຕອບຄຳຖາມໃນຂໍ້ລຸ່ມນີ້:

2.ການປະເມີນຜົນເພື່ອປັບປຸງການຮຽນໃນຫຼັກສູດປະຖົມສຶກສາ ສະບັບປັບປຸງໃໝ່

- ຈຸດປະສົງຂອງການປະເມີນເພື່ອປັບປຸງການຮຽນແມ່ນຫຍັງ ?

- ຕົວຢ່າງວິທີການປະເມີນເພື່ອປັບປຸງການຮຽນມີຫຍັງແດ່ ?

- ເປັນຫຍັງການຕອບຮັບຕໍ່ກັບການປະເມີນເພື່ອປັບປຸງການຮຽນຈຶ່ງມີຄວາມສຳຄັນ ?

- ເວລາທີ່ຄູຄວນດຳເນີນການປະເມີນເພື່ອປັບປຸງການຮຽນ ໄດ້ຂຽນ ຫຼື ອະທິບາຍໄວ້ໃນບົດສອນທີ່ຢູ່ໃນປຶ້ມຄູ່ມືຄູຄືແນວໃດ ?

**3. ການປະເມີນເພື່ອສະຫຼຸບຜົນການຮຽນໃນຫຼັກສູດປະຖົມສຶກສາສະບັບປັບປຸງໃໝ່**

ຫຼັກສູດປະຖົມສຶກສາ ສະບັບປັບປຸງໃໝ່ໄດ້ມາພ້ອມກັບວິທີການປະເມີນຜົນ ເພື່ອສະຫຼຸບຜົນການຮຽນກໍ່ຄືການປະເມີນແບບຣູບຣິກ. ການປະເມີນແບບຣູກຣິກໄດ້ມານຳໃຊ້ແທນການກວດກາປະຈຳອາທິດ, ການກວດກາປະຈຳເດືອນ ( ການສອບເສັງໃນພາກຮຽນທີ 1 ແລະ 2 ແຕ່ກໍຍັງຮັກສາການສອບເສັງແບບຂຽນໃສ່ເຈ້ຍ). ການປະເມີນແບບຣູກຣິກໃນແຕ່ລະບົດທີ່ເຊື່ອມໂຍງກັບຈຸດປະສົງຂອງບົດຮຽນສາມາດຊອກຫາໄດ້ໃນພາກ II ໃນເນື້ອໃນບົດສອນ ( ສຳລັບວິຊາພາສາລາວ ການປະເມີນແບບຣູກຣິກສາມາດຊອກຫາໄດ້ໃນພາກສະເໜີໃນປຶ້ມຄູ່ມືຄູ ). ການປະເມີນແບບຣູບຣິກປະກອບດ້ວຍຕົວຊີ້ວັດຂອງຫຼາຍໆລະດັບຜົນສຳເລັດສຳລັບຈຸດປະສົງຂອງບົດຮຽນ. ໃນຂັ້ນຝຶກປະຕິບັດ ແລະ ນຳໃຊ້ ຄູສັງເກດນັກຮຽນເຮັດກິດຈະກຳເປັນລາຍບຸກຄົນ. ເປັນຄູ່ ຫຼື ເປັນກຸ່ມ ແລະ ໃຫ້ ຄະແນນນັກຮຽນແຕ່ລະຄົນ ເຊິ່ງຂຶ້ນກັບຜົນງານຂອງເຂົາເຈົ້າໃນເວລາທີ່ດຳເນີນກິດຈະກຳ. ຈາກນັ້ນ ຄູສອນກໍ່ປັບປ່ຽນຄະແນນດັ່ງກ່າວມາເປັນຄະແນນສ່ວນ 10 ( ຍົກເວັ້ນວິຊາພາສາລາວ) ແລະ ບັນທຶກຄະແນນດັ່ງກ່າວໃສ່ໃນປຶ້ມບັນທຶກຄະແນນ ( ຈຸດນີ້ຈະໄດ້ລົງເລິກຕື່ມອີກໃນກອງປະຊຸມຕໍ່ໄປ ) ສຳລັບພາສາລາວແມ່ນ 18 ເກນປະເມີນ. ໃນທຸກໆບົດສອນມີ 8 ຊົ່ວໂມງ ແລະ 4 ເກນປະເມີນແມ່ນໄດ້ຖືກນຳໃຊ້ຄື: ເກນສຳລັບການເວົ້າ ແລະ ການຟັງ, ເກນສຳລັບການອ່ານ ແລະ ອີກ ເກນສຳລັບການຂຽນ ສຳລັບວິຊາອື່ນໆແມ່ນມີ ເກນປະເມີນໃນບົດສອນໜຶ່ງໆ ເກນການປະເມີນແບບຣູບຣິກແມ່ນມີຂອບເຂດ ແລະ ລະດັບແຕ່ 0-2 ຄະແນນ ໄປຫາ 0-4 ຄະແນນ. ເພື່ອທີ່ຈະຮູ້ໄດ້ເລິກເຊິ່ງວ່າ ເມື່ອໃດຈະທີ່ຈະນຳໃຊ້ເກນການປະເມີນແບບຣູບຣິກໃນບົດຮຽນເພື່ອປະເມີນນັກຮຽນ ຄູສອນຕ້ອງໄດ້ເບິ່ງທີ່ກ່ອງການວັດ ແລະ ປະເມີນຜົນທີ່ມີຄຳແນະນຳໃນການນຳໃຊ້ເກນການປະເມີນແບບຣູບຣິກ.

**II ການວັດ ແລະ ປະເມີນຜົນ**

1. ໃນບົດນີ້ ປະເມີນຄວາມສາມາດຂອງນັກຮຽນໃນການໃຊ້ຄຳສັບ I am…(ຂ້ອຍແມ່ນ...) You are... ( ເຈົ້າແມ່ນ...) He / she is…(ລາວເພດຊາຍ / ລາວເພດຍິງແມ່ນ...) ໃນກິດຈະກຳເວົ້າ.
2. ປະເມີນນັກຮຽນໃນການຝຶກເວົ້າ, ຊົ່ວໂມງທີ 3 , ຂັ້ນຝຶກປະຕິບັດ ແລະ ນຳໃຊ້.
3. ສັງເກດເບິ່ງທັກສະການເວົ້າຂອງນັກຮຽນໃນຂະນະທີ່ນັກຮຽນປະຕິບັດກິດຈະກຸ່ມ.
4. ນຳໃຊ້ເກນການໃຫ້ຄະແນນຂ້າງລຸ່ມນີ້.

| | |
|---|---|
| **ຄະແນນ** | ນັກຮຽນສາມາດນຳໃຊ້ຄຳສັບ I am…(ຂ້ອຍແມ່ນ...) You are... ( ເຈົ້າແມ່ນ...) He / she is…(ລາວເພດຊາຍ / ລາວເພດຍິງ)ເພື່ອສ້າງປະໂຫຍກ. |

**ການວັດ ແລະ ປະເມີນຜົນ**

ກວດເບິ່ງການອອກສຽງຂອງນັກຮຽນ. ເນັ້ນເວົ້າອອກສຽງ ແລະ ສະແດງທ່າທາງປະກອບ

ຣິບຣິກຊ່ວຍຄູສອນໃນການຊີ້ແຈງ:

a. ນັກຮຽນສາມາດນຳໃຊ້ຄວາມຮູ້ ແລະ ທັກສະໃໝ່ໆ ໃນຕອນທ້າຍຂອງບົດຮຽນຄືແນວໃດ.

b. ນັກຮຽນຮູ້ຫຍັງແດ່ກ່ຽວກັບຫົວຂໍ້ຂອງບົດຮຽນໃນຕອນຕົ້ນຂອງບົດຮຽນ.

| |
|---|
| ນັກສຶກສາພາກັນຕອບຄຳຖາມໃນຂໍ້ລຸ່ມນີ້:<br>3.ການປະເມີນເພື່ອສະຫຼຸບຜົນການຮຽນໃນຫຼັກສູດປະຖົມສຶກສາ ສະບັບປັບປຸງໃໝ່<br>➢ ຣູບຣິກແມ່ນຫຍັງ ?<br>➢ ຣູບຣິກສາມາດຊອກໄດ້ຢູ່ບ່ອນໃດໃນປຶ້ມຄູ່ມືຄູ ?<br>➢ ຄູສອນສາມາດນຳໃຊ້ຣູບຣິກ ເພື່ອປະເມີນນັກຮຽນໄດ້ຄືແນວໃດ ?<br>➢ ຄູສອນຈະຮູ້ໄດ້ແນວໃດວ່າ ເມື່ອໃດພວກເຂົາຄວນນຳໃຊ້ຣູກຣິກເພື່ອປະເມີນນັກຮຽນ ? |
| 4.ຄະແນນປະຈຳເດືອນທີ່ໄດ້ຈາກການປະເມີນ |
| ຄູຄວນປະເມີນນັກຮຽນຢ່າງໜ້ອຍ; 4 ຄັ້ງຕໍ່ເດືອນ ໃນວິຊາພາສາລາວຄື 1 ຄັ້ງ ສຳລັບທັກສະການເວົ້າ, 1 ຄັ້ງ ສຳລັບທັກສະການຟັງ, 1 ຄັ້ງສຳລັບທັກສະການອ່ານ ແລະ ອີກ 1 ຄັ້ງສຳລັບການຂຽນ. ແຕ່ລະບົດສອນພາສາລາວປະກອບມີ 4 ກິດຈະກຳການປະເມີນທີ່ກວມລວມເອົາ 4 ທັກສະ, ສຳລັບຄະນິດສາດ ຄູສອນຄວນປະຕິບັດຕາມຂະບວນການຂອງການປະເມີນທີ່ໄດ້ອະທິບາຍໄວ້ໃນປຶ້ມຄູ່ມືຄູ ວິຊາ ຄະນິດສາດ. ສຳລັບລາຍ |

ວິຊາອື່ນໆຄູສອນຄວນສືບຕໍ່ປະເມີນຢ່າງນ້ອຍໜຶ່ງຄັ້ງຕໍ່ເດືອນ. ສຳລັບຄູຜູ້ໃດຫາກມີຈຳນວນນັກຮຽນນ້ອຍ ເປັນໄປໄດ້ທີ່ຈະສືບຕໍ່ການປະເມີນແບບຮູບຣິກໃນແຕ່ລະບົດຮຽນກັບນັກຮຽນໝົດທຸກຄົນ. ຖ້າເປັນຫ້ອງຮຽນທີ່ມີຈຳນວນນັກຮຽນຫຼາຍກໍ ຄວນແບ່ງນັກຮຽນອອກເປັນສອງກຸ່ມປະເມີນ ໝາຍຄວາມວ່າ ກຸ່ມໜຶ່ງ ຫຼື ເຄິ່ງໜຶ່ງຂອງຫ້ອງປະເມີນໃນບົດສອນໜຶ່ງການສອນ ແລະ ອີກກຸ່ມໜຶ່ງແມ່ນປະເມີນໃນບົດຮຽນຕໍ່ໄປ.

ເພື່ອຄິດໄລ່ຄະແນນປະຈຳເດືອນ ໃນວິຊາພາສາລາວ ຄູຄວນເຮັດດັ່ງຕໍ່ໄປນີ້:

ຖ້າຄູປະເມີນນັກຮຽນໃນທັກສະໃດໜຶ່ງພຽງແຕ່ຄັ້ງດຽວໃນໜຶ່ງເດືອນ ( ເວົ້າ, ຟັງ, ອ່ານ ແລະ ຂຽນ ), ຄູຕ້ອງບອກຄະແນນດັ່ງກ່າວເຂົ້າກັນ.

ຕົວຢ່າງ.

| ເດືອນຕຸລາ ອາທິດ 1 | | | | ຄະແນນລວມ ສຳລັບເດືອນ ຕຸລາ |
|---|---|---|---|---|
| ການເວົ້າ | ການຟັງ | ການອ່ານ | ການຂຽນ | |
| 2 + | 1 + | 2 + | 3 = | 8 |

ຄະແນນຂອງນັກຮຽນສຳລັບເດືອນຕຸລາ = 8

ຖ້າຄູສອນປະເມີນນັກຮຽນຫຼາຍກວ່າໜຶ່ງຄັ້ງພາຍໃນເດືອນໃນແຕ່ລະທັກສະ ( ເວົ້າ , ຟັງ , ອ່ານ ແລະ ຂຽນ ) ຄູສອນຕ້ອງໄດ້ຄິດສະເລ່ຍຄະແນນປະຈຳອາທິດ.

ຕົວຢ່າງ

| ເດືອນ ຕຸລາ ອາທິດ 2 | | | | ຄະແນນລວມ |
|---|---|---|---|---|
| ການເວົ້າ | ການຟັງ | ການອ່ານ | ການຂຽນ | ສຳລັບອາທິດ 2 |
| 2 + | 1 + | 2 + | 3 = | 8 |
| ເດືອນ ຕຸລາ ອາທິດ 3 | | | | ຄະແນນລວມ ສຳລັບອາທິດ 3 |
| ການເວົ້າ | ການຟັງ | ການອ່ານ | ການຂຽນ | |
| 1 + | 1 + | 2 + | 2 = | 6 |

ຄະແນນນັກຮຽນສຳລັບເດືອນຕຸລາ = ( 8+6 ) ÷ 2 = 7

ເພື່ອຄິດໄລ່ຄະແນນປະຈຳເດືອນ ສຳລັບທຸກລາຍວິຊາ ຄູສອນຈະເຮັດຄືຕໍ່ໄປນີ້:

ປ່ຽນຄະແນນຮູບຣິກມາເປັນຄະແນນສ່ວນ 10 ( ເຊິ່ງຈະໄດ້ລົງເລິກເພີ່ມເຕີມໃນພາກຕໍ່ໄປ )

ຖ້ານັກຮຽນຖືກປະເມີນດ້ວຍເກນຮູບຣິກ ຫຼາຍຄັ້ງຕໍ່ເດືອນ...

ຖ້ານັກຮຽນຖືກປະເມີນດ້ວຍ ເກນຮູບຣິກຫຼາຍຄັ້ງຕໍ່ເດືອນ

ຄະແນນສ່ວນ 10 ເປັນຕົວແທນຄະແນນ ປະຈຳເດືອນຂອງນັກຮຽນ

ຄະແນນສ່ວນ 10 ເຊິ່ງຄິດໄລ່ສະເລ່ຍ ເປັນຄະແນນ ປະຈຳເດືອນຂອງນັກຮຽນ.

ຄູສອນຄວນ:

a. ປະເມີນນັກຮຽນທັງໝົດ ໂດຍນຳໃຊ້ເກມຣູບຣິກໃນທຸກໆບົດ.

b. ປະເມີນນັກຮຽນທັງໝົດ ໂດຍນຳໃຊ້ເກມຣູບຣິກຢ່າງໜ້ອຍໃນໜຶ່ງບົດຕໍ່ເດືອນ.

ນັກສຶກສາພາກັນຕອບຄຳຖາມໃນຂໍ້ລຸ່ມນີ້:

4.ຄະແນນປະຈຳເດືອນທີ່ໄດ້ຈາກການປະເມີນ

- ຄູສອນຄວນປະເມີນນັກຮຽນເລື້ອຍໆປານໃດ?

- ຄູສອນຈະຄິດໄລ່ຄະແນນນັກຮຽນມາເປັນຄະແນນປະຈຳເດືອນໃນວິຊາພາສາລາວໄດ້ຄືແນວໃດ ?

- ຄູສອນຈະຄິດໄລ່ຄະແນນນັກຮຽນມາເປັນຄະແນນປະຈຳເດືອນໃນທຸກວິຊາໄດ້ຄືແນວໃດ ?

## 1. ການວັດ ແລະ ປະເມີນຜົນ ວິຊາ ພາສາລາວຊັ້ນປະຖົມສຶກສາປີທີ 5

### 1.1 ການປະເມີນເພື່ອປັບປຸງການຮຽນ

ຈຸດປະສົງຂອງການປະເມີນເພື່ອປັບປຸງການຮຽນ ແມ່ນເພື່ອກວດຄືນຄວາມກ້າວໜ້າໃນການຮຽນຮູ້ຂອງນັກຮຽນ ແລະ ສາມາດບອກໄດ້ວ່າ ນັກຮຽນຕ້ອງການ ການຊ່ວຍເຫຼືອເພີ່ມເຕີມຫຍັງບໍ ເພື່ອທີ່ຈະບັນລຸຈຸດປະສົງຂອງບົດຮຽນ.

ວິຊາພາວາລາວແມ່ນມີ 6 ວິທີການປະເມີນ ເພື່ອປັບປຸງການຮຽນທີ່ຄູສອນສາມາດນຳໃຊ້ ເພື່ອຊ່ວຍເຫຼືອນັກຮຽນ ຜູ້ທີ່ຄູຮູ້ວ່າ ພວກເຂົາຕ້ອງການ ການຊ່ວຍເຫຼືອເພີ່ມເຕີມ.

ບາດກ້າວທີ່ໄດ້ອະທິບາຍໄວ້ກ່ຽວກັບວິທີການປະເມີນເພື່ອປັບປຸງການຮຽນໃນ 20 ບົດນັ້ນແມ່ນວິທີການປະເມີນທີ່ນຳໄປໃຊ້ມີດັ່ງລຸ່ມນີ້:

ວິທີທີ 1

<table>
<tr><th>ຂໍ້</th><th>ຫົວຂໍ້ ແລະ ຈຸດສຸມ</th><th>ວິທີການປະເມີນເພື່ອປັບປຸງການຮຽນ</th></tr>
<tr><td>6</td><td>ເລົ່າຄືນສິ່ງທີ່ພວກເຮົາອ່ານ<br>ນັກຮຽນເລົ່າຄືນບົດເລື່ອງ / ບົດອ່ານ( ເພື່ອກວດຄືນຄວາມເຂົ້າໃຈຂອງພວກເຂົາ )</td><td>ໃນຂະນະທີ່ນັກຮຽນເຮັດກິດຈະກຳເລົ່າຄືນ ໃນບາດກ້າວນີ້, ຄູສາມາດກວດໄດ້ວ່າພວກເຂົາ:<br>• ເຂົ້າໃຈບົດເລື່ອງ/ ບົດອ່ານໄດ້ຫຼາຍປານໃດ.<br>• ພາສາທີ່ພວກເຂົານຳໃຊ້ເພື່ອສົນທະນາກ່ຽວກັບບົດເລື່ອງ / ບົດອ່ານ.</td></tr>
<tr><td colspan="3">ການສອນສາທິດ:<br>➢ ບອກໃຫ້ນັກສຶກສາ ສະແດງບົດບາດເປັນນັກຮຽນປະຖົມຂັ້ນ ປ 5 ເພື່ອເຮັດກິດຈະກຳ ( ປຶ້ມແບບຮຽນ,ພາສາລາວ, ບົດທີ 18, ກິດຈະກຳ 6 ໂຍນໝາກກະລ໋ອກ ).ກິດຈະກຳນີ້ແມ່ນຈະໃຫ້ນັກຮຽນເລົ່າຄືນບົດອ່ານອີງຕາມຄຳຖາມຈາກເກມການໝາກກະລ໋ອກ.<br>➢ ເພື່ອກະກຽມສຳລັບການສອນສາທິດ, ນັກສຶກສາຕ້ອງໄດ້ອ່ານ ແລະ ສຶກສາເບິ່ງບົດອ່ານກ່ອນ ( ປຶ້ມແບບຮຽນພາສາລາວ, ບົດທີ 18, ກິດຈະກຳ 3 ) ເພື່ອສ້າງຄວາມຄຸ້ນເຄີຍ.<br>➢ ນັກສຶກສາ( ຜູ້ທີ່ຈະສະແດງບົດບາດສົມມຸດເປັນນັກຮຽນປະຖົມຂັ້ນ ປ 5 ) ຜັດປ່ຽນກັນເລົ່າຄືນດ້ວຍການຕອບຄຳຖາມຈາກເກມໝາກກະລ໋ອກ ຄູໄດ້ຕິດຕາມນັກສຶກສາໃນການເຮັດກິດຈະກຳ.<br>➢ ໃນຕອນທ້າຍຂອງການສອນສາທິດ ໃຫ້ອະທິບາຍກ່ຽວກັບວິທີການປະເມີນເພື່ອປັບປຸງການຮຽນ ( ການຕິດຕາມນັກຮຽນເລົ່າຄືນ ) ທີ່ຊ່ວຍໃຫ້ນັກສຶກສາສາມາດຕັດສິນໄດ້ວ່າ ນັກຮຽນມີຄວາມເຂົ້າໃຈກ່ຽວກັບບົດອ່ານໄດ້ຫຼາຍໜ້ອຍປານໃດ. ຖ້ານັກຮຽນບໍ່ສາມາດເລົ່າຄືນໄດ້ ນັ້ນກໍ່ສະແດງວ່ານັກຮຽນບໍ່ເຂົ້າໃຈບົດອ່ານ ແລະ ຄູຄວນໃຫ້ການຊ່ວຍເຫຼືອເພີ່ມເຕີມ ເພື່ອຊ່ວຍໃຫ້ພວກເຂົາເຂົ້າໃຈກ່ອນທີ່ຈະກ້າວສູ່ກິດຈະກຳຕໍ່ໄປ.</td></tr>
</table>

ວິທີ ທີ 2

<table>
<tr><th>ຂໍ້</th><th>ຫົວຂໍ້ ແລະ ຈຸດສຸມ</th><th>ວິທີການປະເມີນເພື່ອປັບປຸງການຮຽນ</th></tr>
<tr><td>12</td><td>ການຝຶກນຳໃຊ້<br>ໄວຍາກອນ<br>ນັກຮຽນນຳໃຊ້ໄວຍາກອນເປົ້າໝາຍເຂົ້າໃນການອ່ານ ແລະ ການຂຽນ</td><td>ໃນຂະນະທີ່ນັກຮຽນເຮັດກິດຈະກຳໄວຍາກອນຂອງບາດກ້າວ, ຄູສາມາດກວດໄດ້ວ່ານັກຮຽນ:<br>• ເຂົ້າໃຈໄວຍາກອນທີ່ສອນບໍ.<br>• ສາມາດນຳໃຊ້ເຂົ້າໃນການຂຽນບໍ.</td></tr>
<tr><td colspan="3">ການສອນສາທິດ:<br>➢ ບອກໃຫ້ນັກສຶກສາວ່າ ພວກເຂົາຈະໄດ້ສະແດງບົດບາດເປັນນັກຮຽນປະຖົມຂັ້ນ ປ 5. ຜູ້ທີ່ກຳລັງຮຽນຄຳສັບ ຫຼື ສຳນວນ ທີ່ໃຊ້ໃນກາລະອະດີດ ( ພາສາລາວ, ບົດທີ 18, ກິດຈະກາ 12 ປຶ້ມແບບຮຽນ ).<br>➢ ໃນກິດຈະກຳນີ້, ນັກສຶກສາ ( ຜູ້ທີ່ສະແດງບົດບາດສົມມຸດເປັນນັກຮຽນປະຖົມຂັ້ນປ 5 ) ຈະໄດ້ປ່ຽນຄຳກຳມະເປັນກາລະອະດີດ ແລະ ນຳໃຊ້ມັນເພື່ອສ້າງ 3 ປະໂຫຍກໃນກາລະອະດີດ.<br>➢ ຕິດຕາມນັກສຶກສາໃນຂະນະທີ່ພວກເຂົາເຮັດກິດຈະກຳນີ້ ແລະ ໃຫ້ການຊ່ວຍເຫຼືອເພີ່ມເຕີມ ຖ້າຈຳເປັນ.<br>➢ ໃນຕອນທ້າຍຂອງການສອນສາທິດ ອະທິບາຍວ່າວິທີການປະເມີນເພື່ອປັບປຸງການຮຽນແມ່ນຊ່ວຍໃຫ້ນັກສຶກສາຕັດສິນໄດ້ວ່າ ນັກຮຽນສາມາດນຳໃຊ້ຫຼັກໄວຍາກອນເຂົ້າໃນການອ່ານ ແລະ ການຂຽນໄດ້ຄືແນວໃດແດ່.<br>ຖ້ານັກຮຽນຫາກມີຄວາມຫຍຸ້ງຍາກໃນການນຳໃຊ້ຫຼັກໄວຍາກອນ ນັ້ນກໍສະແດງວ່າພວກເຂົາຕ້ອງການ ການຝຶກຊ້ອມເພີ່ມເຕີມໃນຈຸດນັ້ນໆ ກ່ອນທີ່ຈະກ້າວໄປສູ່ກິດຈະກຳຕໍ່ໄປ.</td></tr>
</table>

ວິທີ ທີ 3

| ຂໍ້ | ຫົວຂໍ້ ແລະ ຈຸດສຸມ | ວິທີການປະເມີນເພື່ອປັບປຸງການຮຽນ |
|---|---|---|
| 13 | ຝຶກນຳໃຊ້ຄຳສັບ ແລະ ສຳນວນໃໝ່ໆ<br>ນັກຮຽນນຳໃຊ້ຄວາມຮູ້ກ່ຽວກັບຄຳສັບໃໝ່ ເຂົ້າໃນການອ່ານ ແລະ ການຂຽນ. | ໃນຂະນະທີ່ນັກຮຽນເຮັດກິດຈະກຳຄຳສັບຢູ່ໃນບາດກ້າວນີ້, ຄູສາມາດກວດຄືນໄດ້ວ່າພວກເຂົາ:<br>• ເຂົ້າໃຈຄຳສັບໃໝ່ບໍ.<br>• ສາມາດນຳໄປໃຊ້ໄດ້ຢ່າງຖືກຕ້ອງບໍ. |

ການສອນສາທິດ:

- ບອກນັກສຶກສາວ່າພວກເຂົາຈະຕ້ອງສະແດງບົດບາດສົມມຸດເປັນນັກຮຽນປະຖົມຂັ້ນປ5 ຜູ້ທີ່ກຳລັງເຮັດກິດຈະກຳຂຽນຈົດໝາຍໃນບົດເລື່ອງ / ບົດອ່ານ-ຂຽນຕົວອັກສອນ ( ພາສາລາວ, ບົດທີ 18, ກິດຈະກຳ 13 ປຶ້ມແບບຮຽນ ) .
- ໃນກິດຈະກຳນີ້ ນັກສຶກສາ ( ຜູ້ທີ່ຄວນສະແດງບົດບາດເປັນນັກຮຽນປະຖົມຂັ້ນປ5) ຈະໄດ້ຕື່ມບ່ອນຫວ່າງໃນປະໂຫຍກດ້ວຍຄຳແທນນາມ.
- ຕິດຕາມນັກຮຽນໃນຂະນະທີ່ພວກເຂົາເຮັດກິດຈະກຳນີ້ ແລະ ໃຫ້ການຊ່ວຍເຫຼືອເພີ່ມເຕີມ ຖ້າຈຳເປັນ. ໜຶ່ງຮູບແບບຂອງການໃຫ້ການຊ່ວຍເຫຼືອ ໂດຍບໍ່ແມ່ນການໃຫ້ຄຳຕອບແກ່ນັກຮຽນເພື່ອເປັນແນວທາງໃຫ້ເຂົາເຈົ້າ. ຕົວຢ່າງ, ຖ້ານັກສຶກສາສັງເກດເຫັນວ່າ ນັກຮຽນຜູ້ໃດຜູ້ໜຶ່ງເຮັດຜິດ ນັກສຶກສາກໍບອກເຂົາ " ມີບ່ອນຜິດຢູ່ນີ້ເດີ, ນ້ອງສາມາດຊອກໄດ້ບໍ" " ເບິ່ງຄຳສັບນີ້ ຢູ່ບ່ອນນີ້" ບ່ອນນັ້ນບໍ່ຖືກ. ນ້ອງຄິດວ່າມັນຄວນຢູ່ບ່ອນໃດ ?
- ໃນຕອນທ້າຍຂອງການສອນສາທິດ ອະທິບາຍວ່າ ວິທີການປະເມີນເພື່ອປັບປຸງການຮຽນນີ້ແມ່ນຊ່ວຍໃຫ້ນັກສຶກສາຕັດສິນໄດ້ວ່າ ນັກຮຽນມີຄວາມເຂົ້າໃຈ ແລະ ສາມາດນຳໃຊ້ຄຳແທນນາມໄດ້ຫຼາຍປານໃດ.ຖ້ານັກຮຽນຫາກມີບັນຫາໃນການນຳໃຊ້ຄຳສັບໄດ້ຢ່າງຖືກຕ້ອງ ນີ້ກໍສະແດງວ່າ ພວກເຂົາຕ້ອງໄດ້ ຝຶກຊ້ອມເພີ່ມເຕີມກ່ອນທີ່ຈະກ້າວໄປສູ່ກິດຈະກຳຕໍ່ໄປ.

ວິທີ ທີ 4

| ຂໍ້ | ຫົວຂໍ້ ແລະ ຈຸດສຸມ | ວິທີການປະເມີນເພື່ອປັບປຸງການຮຽນ |
|---|---|---|
| 14 | ຂ້ອຍຄິດວ່າຫຍັງ ?<br>ນັກຮຽນສ້າງແນວຄິດຂອງຕົນກ່ຽວກັບຫົວຂໍ້. | ໃນຂະນະທີ່ນັກຮຽນກຳລັງເຮັດກິດຈະກຳ ໃນບາດກ້າວນີ້, ຄູສາມາດສັງເກດວ່ານັກຮຽນ:<br>• ເຂົ້າໃຈແນວຄວາມຄິດສຳຄັນທີ່ເວົ້າເຖິງໃນບົດຮຽນ.<br>• ສາມາດນຳໃຊ້ແນວຄວາມຄິດທີ່ນອກເໜືອຈາກເນື້ອໃນຂອງບົດທີ່ພວກເຂົາອ່ານ. |
| ການສອນສາທິດ:<br>➢ ບອກນັກສຶກສາວ່າ ພວກເຂົາຄວນສະແດງບົດບາດເປັນນັກຮຽນປະຖົມຂັ້ນປ5 ຜູ້ທີ່ກຳລັງເຮັດກິດຈະກຳເພື່ອຊ່ວຍເຫຼືອພວກເຂົາກະກຽມສຳລັບກິດຈະກຳການຂຽນ ( ພາສາລາວ, ບົດທີ 18, ກິດຈະກຳ 16 ປຶ້ມແບບຮຽນ ) .<br>➢ ໃນກິດຈະກຳນີ້ ນັກສຶກສາ ( ຜູ້ທີ່ກຳລັງສະແດງບົດບາດເປັນນັກຮຽນປະຖົມຂັ້ນປ5) ຈະໄດ້ເຮັດວຽກຮ່ວມກັນໝົດຫ້ອງເພື່ອແຕ່ງພາກເປີດຫົວເລື່ອງກ່ຽວກັບການຂຽນຂ່າວໂດຍຄູຈະເປັນຜູ້ໃຫ້ການຊຸກຍູ້ຊ່ວຍເຫຼືອໃນການແຕ່ງ.<br>➢ ຄູຊ່ວຍນັກຮຽນໃຫ້ຄິດກ່ຽວກັບຫົວຂໍ້ຂ່າວ ແລະ ຂຽນໃສ່ກະດານ / ເຈ້ຍ. ຖາມຄຳຖາມເຈາະຈີ້ມກັບນັກຮຽນກ່ອນກ່ຽວກັບຂໍ້ມູນທີ່ຈຳເປັນທີ່ນຳໃຊ້ໃນການຂຽນບົດລາຍງານຂ່າວ ໂດຍອີງໃສ່ຕາຕະລາງ / ໂຄງຮ່າງໃນປຶ້ມແບບຮຽນ. ໃຫ້ຂຽນຄຳຕອບທີ່ໄດ້ຈາກການຖາມເຈາະຈີ້ມລົງໃສ່ກະດານ / ເຈ້ຍ ເພື່ອສ້າງເປັນພາກເປີດຫົວເລື່ອງຂອງຂ່າວໃຫ້ສຳເລັດ.<br>➢ ຈາກນັ້ນ, ຄູຊຸກຍູ້ຊ່ວຍເຫຼືອນັກຮຽນໃນການອ່ານພາກເປີດຫົວເລື່ອງຂອງບົດຂ່າວຄືນ ແລະ ກວດແກ້ຮ່ວມກັນກັບນັກຮຽນວ່າເນື້ອເລື່ອງມີຄວາມເໝາະສົມ ຫຼື ຕ້ອງດັດແກ້ໃຫ້ຖືກຕ້ອງບໍ່.<br>➢ ໃນຕອນທ້າຍຂອງການສາທິດ ອະທິບາຍວ່າ ວິທີການປະເມີນເພື່ອປັບປຸງການຮຽນເພື່ອຕັດສິນວ່າ ນັກຮຽນມີຄວາມເຂົ້າໃຈຫຼາຍປານໃດ ກ່ຽວກັບຂໍ້ມູນທີ່ຈະປະກອບເຂົ້າໃນການຂຽນພາກເປີດຫົວເລື່ອງ.ການປະຕິບັດນີ້ ແມ່ນເພື່ອຮັບປະກັນວ່ານັກຮຽນມີຄວາມເຂົ້າໃຈ ແລະ ຮູ້ວິທີການວ່າຕ້ອງຂຽນແນວໃດ ກ່ອນທີ່ຈະກ້າວໄປສູ່ກິດຈະກຳຕໍ່ໄປ. | | |

ວິທີ ທີ 5

| ຂໍ້ | ຫົວຂໍ້ ແລະ ຈຸດສຸມ | ວິທີການປະເມີນເພື່ອປັບປຸງການຮຽນ |
|---|---|---|
| 17 | ການວາງແຜນໜ້າວຽກຂອງຂ້ອຍ<br>ນັກຮຽນວາງແຜນໜ້າວຽກຂອງຕົນ. | ໃນຂະນະທີ່ນັກຮຽນຕື່ມໃສ່ແຜນວຽກຂອງຕົນ ຄູສາມາດກວດຄືນໄດ້ວ່າພວກເຂົາ:<br>• ເຂົ້າໃຈຈຸດປະສົງ ແລະ ໂຄງສ້າງຂອງປະເພດບົດ.<br>• ສາມາດຮັບຮູ້ແນວຄິດຂອງຕົນເອງ ທີ່ເປັນຈຸດປະສົງຂອງໜ້າວຽກ. |
| ການສອນສາທິດ:<br>➢ ບອກນັກສຶກສາໃຫ້ສະແດງບົດບາດເປັນນັກຮຽນປະຖົມຂັ້ນ ປ5 ຜູ້ທີ່ເຮັດກິດຈະກຳເພື່ອຊ່ວຍກະກຽມກິດຈະກຳການຂຽນບົດລາຍງານ ( ພາສາລາວ, ບົດທີ 18, ກິດຈະກຳ 17 ປຶ້ມແບບຮຽນ ) .<br>➢ ໃນກິດຈະກຳນີ້ ນັກສຶກສາ ( ຄວນສະແດງບົດບາດເປັນນັກຮຽນປະຖົມຂັ້ນປ5) ກຳລັງຂຽນຕື່ມໃສ່ຮ່າງ ເພື່ອວາງແຜນການຂຽນຂ່າວໃນກິດຈະກຳຕໍ່ໄປ.<br>➢ ຕິດຕາມນັກຮຽນໃນຂະນະທີ່ພວກເຂົາຂຽນໃສ່ຮ່າງ ເພື່ອຮັບປະກັນວ່າພວກເຂົາປະກອບຂໍ້ມູນທີ່ກ່ຽວຂ້ອງ. ຊ່ວຍເຫຼືອນັກຮຽນຖ້າຈຳເປັນ ເພື່ອຮັບປະກັນວ່າ ພວກເຂົາສາມາດຕື່ມຂໍ້ມູນໃສ່ຮ່າງໄດ້ຢ່າງພຽງພໍ ແລະ ເໝາະສົມ.<br>➢ ໃນຕອນທ້າຍຂອງການສາທິດ ອະທິບາຍວ່າ ວິທີການປະເມີນເພື່ອປັບປຸງການຮຽນຊ່ວຍໃຫ້ນັກສຶກສາຮັບປະກັນວ່າ ນັກຮຽນມີຄວາມພ້ອມທີ່ຈະກ້າວໄປສູ່ກິດຈະກຳການຂຽນ ເຊິ່ງເປັນກິດຈະກຳຕໍ່ໄປ ບໍ ຫຼື ບໍ . | | |

ວິທີ ທີ 6

<table>
<tr><td>ຂໍ້</td><td>ຫົວຂໍ້ ແລະ ຈຸດສຸມ</td><td>ວິທີການປະເມີນເພື່ອປັບປຸງການຮຽນ</td></tr>
<tr><td>18</td><td>ການຮ່າງໜ້າວຽກຂອງຂ້ອຍ ນັກຮຽນຂຽນຮ່າງໜ້າວຽກຂອງຕົນ.</td><td>ໃນຂະນະທີ່ນັກຮຽນສໍາເລັດຮ່າງໜ້າວຽກທໍາອິດ ຄູສາມາດກວດຄືນໄດ້ວ່າພວກເຂົາ:<ul><li>ສາມາດນໍາໃຊ້ຄວາມຮູ້ຂອງພວກເຂົາກ່ຽວກັບປະເພດຂອງບົດ ແລະ ຂຽນເລື່ອງໃດເລື່ອງໜຶ່ງຂຶ້ນມາ ຫຼື ແຕ່ງເປັນບົດຄໍາເວົ້າ.</li><li>ສາມາດສະແດງແນວຄິດ ໂດຍນໍາໃຊ້ພາສາທີ່ເໝາະສົມ ( ລວມເຖິງ ຄໍາສັບ ແລະ ຫຼັກໄວຍາກອນ ), ເຄື່ອງໝາຍວັກຕອນ, ການສະກົດຄໍາ ຫຼື ບົດສົນທະນາ.</li></ul></td></tr>
<tr><td colspan="3">ການສອນສາທິດ:<ul><li>ບອກນັກສຶກສາໃຫ້ສະແດງບົດບາດເປັນນັກຮຽນປະຖົມຂັ້ນປ5 ຜູ້ທີ່ກໍາລັງຂຽນຂ່າວ ( ພາສາລາວ, ບົດທີ 18, ກິດຈະກາ 18 ປຶ້ມແບບຮຽນ ) ໂດຍນໍາໃຊ້ເນື້ອໃນຢູ່ໃນຮ່າງທີ່ໄດ້ຂຽນໃນກິດຈະກໍາຜ່ານມາ .</li><li>ຕິດຕາມນັກຮຽນໃນຂະນະທີ່ພວກເຂົາຂຽນສ່ວນທໍາອິດພາດເປີດຫົວເລື່ອງຂອງຂ່າວທີ່ຮ່າງໄວ້. ຊ່ວຍເຫຼືອນັກຮຽນຖ້າຈໍາເປັນ ເພື່ອຮັບປະກັນວ່າ ພວກເຂົາສາມາດສໍາເລັດວຽກທີ່ມອບໝາຍໃຫ້. ວິທີການຊ່ວຍເຫຼືອນັກຮຽນ ວິທີໜຶ່ງ ໂດຍບໍ່ເປັນການໃຫ້ຄໍາຕອບເຂົາເຈົ້າຄື: ໃນເວລາທີ່ນັກສຶກສາສັງເກດເຫັນວ່າ ນັກຮຽນເຮັດຜິດ ກໍ່ໃຫ້ຊີ້ໃສ່ຈຸດທີ່ຜິດ ແລະ ແນະນໍາໃຫ້ພວກເຂົາໄປເບິ່ງຄືນຕົວຢ່າງໃນກິດຈະກໍາ 3 ( ພາສາລາວ, ບົດທີ 18 ປຶ້ມແບບຮຽນ ) ເພື່ອຊຸກຍູ້ເຂົາເຈົ້າໃນການສັງເກດໄດ້ຈຸດທີ່ຜິດ ແລະ ກວດແກ້ຄືນຈຸດຜິດຢ່າງເອກະລາດ.</li><li>ໃນຕອນທ້າຍຂອງການສາທິດ ອະທິບາຍວ່າ ວິທີການປະເມີນເພື່ອປັບປຸງການຮຽນຊ່ວຍໃຫ້ນັກສຶກສາຮັບປະກັນວ່າ ນັກຮຽນສາມາດນໍາໃຊ້ຄວາມຮູ້ໃນປະເພດບົດອ່ານແລ້ວສ້າງເປັນບົດລາຍງານ, ຂຶ້ນມາໄດ້ຢ່າງເອກະລາດ .</li></ul></td></tr>
</table>

## 1.2 ການປະເມີນເພື່ອສະຫຼຸບຜົນການຮຽນ

1. ວິຊາພາສາລາວຂັ້ນ ປ 5 ແມ່ນມີ 8 ຊົ່ວໂມງ / ຕໍ່ອາທິດ ແຕ່ລະບົດປະກອບມີ 4 ເກນການເມີນແບບຣູບຣິກ ສໍາລັບສີ່ທັກສະດັ່ງກ່າວຄື: ທັກສະການເວົ້າ, ການຟັງ, ການອ່ານ ແລະ ການຂຽນ.
2. ຄະແນນສູງສຸດຂອງຄະແນນຣູບຣິກທັງສີ່ ລວມເຂົ້າກັນເປັນຄະແນນ 10
   - ການເວົ້າ, ການຟັງ, ການອ່ານ ແລະ ການຂຽນ ອີງຕາມໃນປຶ້ມຄູ່ມືຄູ
3. ໃນຕອນຕົ້ນຂອງປີ ໃຫ້ແບ່ງນັກຮຽນອອກເປັນສອງກຸ່ມປະເມີນຄື: ກຸ່ມ 1 ແລະ ກຸ່ມ 2 . ໜຶ່ງບົດສອນຕໍ່ອາທິດ ( 4 ບົດສອນຕໍ່ເດືອນ ) ປະເມີນກຸ່ມ 1 ປະເມີນຢູ່ບົດທີ 1 ແລະ ບົດທີ 3 ພາຍໃນເດືອນ ແລະ ປະເມີນກຸ່ມ 2 ປະເມີນຢູ່ບົດທີ 2 ແລະ ບົດທີ 4.

4. ເພື່ອຄິດໄລ່ຄະແນນປະຈຳອາທິດຂອງນັກຮຽນ ໃຫ້ບວກຄະແນນທີ່ໄດ້ຈາກການປະເມີນທັງ 4 ຄັ້ງເຂົ້າກັນ.
5. ເພື່ອຄິດໄລ່ຄະແນນປະຈຳເດືອນຂອງນັກຮຽນ ໃຫ້ບວກຄະແນນທີ່ໄດ້ຈາກການປະເມີນສອງຄັ້ງເຂົ້າກັນ ແລ້ວຫານໃຫ້ 2 .
6. ເຮັດວຽກເປັນຄູ່ ເພື່ອປະເມີນນັກຮຽນດ້ານລຸ່ມນີ້ສຳລັບອາທິດທີ 3 ຂອງເດືອນ ກຸມພາ ໃນທັກສະການເວົ້າ, ການອ່ານ, ການຂຽນ ແລະ ການຟັງ, ໃຫ້ປະຕິບັດຕາມຄຳແນະນຳໃນການຄິດໄລ່ຄະແນນປະຈຳອາທິດ ແລະ ປະຈຳເດືອນໃຫ້ແກ່ນັກຮຽນ.

**ຕົວຢ່າງ: ການປະເມີນເພື່ອສະຫຼຸບຜົນການຮຽນ**

1. ໃຫ້ນັກສຶກສາອ່ານຂໍ້ຄວາມລຸ່ມແລ້ວ ແລະ ສຶກສາເກນການປະເມີນໃຫ້ຄະແນນ ແລ້ວໃຫ້ຄະແນນຕາມເກນທີ່ກຳນົດໄວ້ໃນປຶ້ມຄູ່ມື.

| ເດືອນ ກຸມພາ - ອາທິດ 3 |
|---|
| ບົດທີ 18, ຊົ່ວໂມງ 1, ຂັ້ນຈັດກິດຈະກຳການຮຽນ,ກິດຈະກຳ 4 , ( ການອ່ານ ) |
| **ຄູ**: ໃຫ້ພວກນ້ອງຂຽນຄຳຕອບຕື່ມໃສ່ຕໍ່ໄປນີ້ໃສ່ປຶ້ມ.<br>1. ວິທີການໂຍກໝາກກະລ໋ອກເພື່ອຖາມຄຳຖາມຊ່ວຍໃຫ້ຂ້ອຍເຂົ້າໃຈກ່ຽວກັບສິ່ງທີ່ຂ້ອຍອ່ານດ້ວຍການ.......<br>**ນັກຮຽນຂຽນຄຳຕອບໃສ່ປຶ້ມ**:<br>1. ວິທີການໂຍນໝາກກະລ໋ອກເພື່ອຖາມຄຳຖາມຊ່ວຍໃຫ້ຂ້ອຍເຂົ້າໃຈກ່ຽວກັບສິ່ງທີ່ຂ້ອຍອ່ານດ້ວຍການຕັ້ງຄຳຖາມກ່ຽວກັບບົດຮຽນເຊັ່ນວ່າ ເມື່ອໂຍນໝາກກະລ໋ອກໄດ້ເລກ 2 ຄຳສັບ “ຢູ່ໃສ” ພວກເຮົາກໍຕັ້ງຄຳຖາມວ່າ ນ້ຳຖ້ວມຢູ່ໃສ? ( ຂຽນຄຳຖາມໃສ່ໃນປຶ້ມ ) ແລ້ວໃຫ້ໝູ່ໃນກຸ່ມຕອບ. ໝູ່ໃນກຸ່ມຕອບວ່ານ້ຳຖ້ວມຢູ່ ບ້ານນາຍາວ ເມືອງໄຊຍະບູລີ ( ຂຽນຄຳຕອບໃສ່ໃນປຶ້ມ ) ວິທີການນີ້ເຮັດໃຫ້ພວກເຮົາຈື່ ແລະ ເຂົ້າໃຈບົດຮຽນໄດ້ດີຂຶ້ນ.  |
| **ຄະແນນ :** |

2. ໃຫ້ນັກສຶກສາອ່ານຂໍ້ຄວາມລຸ່ມແລ້ວ ແລະ ສຶກສາເກນການປະເມີນໃຫ້ຄະແນນ ແລ້ວໃຫ້ຄະແນນຕາມເກນທີ່ກຳນົດໄວ້ໃນປຶ້ມຄູ່ມື.

ບົດທີ 18, ຊົ່ວໂມງ 2, ຂັ້ນສະຫຼຸບ ( ການເວົ້າ )

**ຄູ**: ວິທີການອ່ານທີ່ພວກເຮົາຫາກໍ່ຮຽນມື້ນີ້ແມ່ນປະເພດໃດ ?

**ນັກຮຽນ**: ປະເພດການຕັ້ງຄຳຖາມ.

**ຄູ** : ວິທີການດັ່ງກ່າວນີ້ມີຈັກວິທີ ?



**ນັກຮຽນ**: ມີ 3 ວິທີຄື: ກ່ອນການອ່ານ,( ຖາມຄາຖາມໝູ່ຮ່ວມຫ້ອງ )ໃນຂະນະອ່ານ(ຖາມຄຳຖາມທີ່ຂ້ອຍມີ ) ແລະ ຫຼັງການອ່ານ ( ການໂຍນໝາກກະລ່ອກ )

**ຄູ** : ຫຼານອະທິບາຍວິທີໃດໜຶ່ງໄດ້ບໍ່ ?

**ນັກຮຽນ**: ຫຼານສາມາດອະທິບາຍວິທີຫຼັງການອ່ານຄື: ໂຍນໝາກກະລ່ອກໄດ້. ເຮົາໂຍນໝາກກະລ່ອກແລ້ວຖາມຄຳຖາມກ່ຽວກັບບົດອ່ານຕາມຄຳສັບໃນໝາກກະລ່ອກ. ຕົວຢ່າງ: ໂຍນໄດ້ຄຳສັບ: ເມື່ອໃດ, ຄຳຖາມແມ່ນ: ນ້ຳຖ້ວມເກີດຂຶ້ນເມື່ອໃດ ?

**ຄູ**: ວິທີການອ່ານນີ້ເປັນປະໂຫຍດ ແລະ ສະດວກດີບໍ່ ? ຍ້ອນຫຍັງ ?

**ນັກຮຽນ**: ເປັນປະໂຫຍດເພາະມັນຊ່ວຍໃຫ້ຄາຖາມງ່າຍຂຶ້ນ.

**ຄະແນນ :**

ບົດທີ 18, ຊົ່ວໂມງ 6 , ກິດຈະກຳ 17 ( ການຟັງ )

**ຄູ**: ຕອນນີ້ເຈົ້າກຳລັງເຮັດຫຍັງ ?

**ນັກຮຽນ**: ຕື່ມຂໍ້ມູນກ່ຽວກັບບົດລາຍງານຂ່າວ.

**ຄູ**: ເຈົ້າເຂົ້າໃຈກິດຈະກຳບໍ່ ? ໃຫ້ຄູຊ່ວຍອະທິບາຍຕື່ມບໍ່ ?

**ນັກຮຽນ**: ໂດຍ. ຫຼານບໍ່ເຂົ້າໃຈວ່າຈະເລີ່ມຂຽນຈາກຈຸດໃດ ?.



**ຄູ** : ນັກຮຽນຕ້ອງເລີ່ມຈາກກຳນົດຫົວຂໍ້, ເປີດຫົວເລື່ອງ, ເນື້ອເລື່ອງ ແລະ ສະຫຼຸບເລື່ອງ ໂດຍນຳໃຊ້ໂຄງຮ່າງປະເພດບົດລາຍງານ

**ນັກຮຽນ**: ເຂົ້າໃຈແລ້ວ. ຂອບໃຈຄູ. ຫຼານຂຽນຂ່າວກ່ຽວກັບຫຍັງກໍ່ໄດ້ແມ່ນບໍ ?

**ຄູ** : ແມ່ນແລ້ວ.

ນັກຮຽນ: ຫຼານຈະຂຽນກ່ຽວກັບອາກາດ. ຫຼານຕ້ອງໃສ່ຫົວຂໍ້ແນວໃດ ?

ຄູ: ຊັ້ນຫຼານສາມາດໃສ່ຫົວຂໍ້ວ່າ ຂ່າວກ່ຽວກັບສະພາບອາກາດ.

**ຄະແນນ :**

**ເດືອນ ກຸມພາ- ອາທິດ 3**

<table>
<tr><td>ບົດທີ 18, ຊົ່ວໂມງ 8, ກິດຈະກຳ 20 : ( ການຂຽນ )</td></tr>
<tr><td>ຄູໃຫ້ນັກຮຽນອ່ານບົດລາຍງານຂອງຕົນ.<br>ນັກຮຽນ: ຂ່າວກ່ຽວກັບສະພາບອາກາດ<br>ຂ້າພະເຈົ້າ ທ້າວ ຄຳສາຍ ນັກຂ່າວ ສະຖານີວິທະຍຸ<br>ກະຈາຍສຽງແຂວງໄຊສົມບູນ ຂໍລາຍງານກ່ຽວກັບ<br>ສະພາບອາກາດໃນວັນທີ 16 ມິຖຸນາ 2023.<br><br>ກົມອຸຕຸນິຍົມ ແລະ ອຸທົກກະສາດ ແຈ້ງໃຫ້ຊຸມບອ່າ ຈະມີພະຍຸຝົນຕົກແຕ່ຄ່ອຍຫາປານກາງ ຄວາມກົດດັນອາກາດຢູ່ທີ່ 18 ອົງສາ ພ້ອມທັງມີລົມພັດແຮງຢູ່ໃນບາງເຂດ.<br>ດັ່ງນັ້ນ ຈິ່ງແຈ້ງເຖິງພໍ່ແມ່ປະຊາຊົນຈົ່ງມີສະຕິກຽມພ້ອມຮັບມືກັບການປ່ຽນແປງອຸ່ນນະພູມ ແລະ ລະວັງບໍ່ໃຫ້ເກີດອັກຄີກໄຟ ເຊິ່ງ ຈະພາໃຫ້ເກີດຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນ.</td></tr>
<tr><td></td></tr>
</table>

ຄະແນນປະຈຳອາທິດຂອງນັກຮຽນ ( ຄະແນນລວມປະຈຳອາທິດທີ 3 ): ______________

| ທັກສະ | ຄະແນນຮູບຮົກ : ອາທິດທີ 1 |
|---|---|
| ການເວົ້າ : | |
| ການຟັງ : | 2 |
| ການອ່ານ : | |
| ການຂຽນ : | |
| ຄະແນນປະເມີນປະຈຳອາທິດ | |

ຄະແນນປະຈຳເດືອນຂອງນັກຮຽນ ( ຄະແນນການປະເມີນປະຈຳອາທິດຂອງນັກຮຽນ ໃນອາທິດທີ 1 ແມ່ນ 9. ເພື່ອຄິດໄລ່ຄະແນນປະຈຳເດືອນ ໃຫ້ຄິດໄລ່ຄະແນນການປະເມີນໃນອາທິດທີ 1 ແລະ 3 ບວກກັນຫານ 2 ເພື່ອເປັຍຄະແນນສະເລ່ຍປະຈຳເດືອນ)__________

## 2. ການວັດ ແລະ ປະເມີນຜົນ ວິຊາ ພາສາອັງກິດຊັ້ນປະຖົມສຶກສາປີທີ 5

### 2.1 ການປະເມີນເພື່ອປັບປຸງການຮຽນ

ຈຸດປະສົງຂອງການປະເມີນເພື່ອປັບປຸງການຮຽນ ແມ່ນເພື່ອກວດຄືນຄວາມກ້າວໜ້າຂອງນັກຮຽນ ແລະ ລະບຸຈຸດທີ່ນັກຮຽນຕ້ອງການ ການຊ່ວຍເຫຼືອເພີ່ມເຕີມ ເພື່ອໃຫ້ບັນລຸໄດ້ຈຸດປະສົງຂອງບົດຮຽນ.

ວິຊາພາສາອັງກິດແມ່ນມີ 3 ວິທີການຊ່ວຍເຫຼືອການປະເມີນ ເພື່ອປັບປຸງການຮຽນທີ່ຄູສອນສາມາດນຳໃຊ້ ເພື່ອຊ່ວຍເຫຼືອນັກຮຽນ ຜູ້ທີ່ຄູຮູ້ວ່າ ພວກເຂົາຕ້ອງການ ການຊ່ວຍເຫຼືອເພີ່ມເຕີມ.

ບາດກ້າວທີ່ໄດ້ອະທິບາຍໄວ້ກ່ຽວກັບວິທີການປະເມີນເພື່ອປັບປຸງການຮຽນໃນ ......
ບົດນັ້ນແມ່ນວິທີການປະເມີນທີ່ນາໄປໃຊ້ມີດັ່ງລຸ່ມນີ້:

| ວິທີການຊ່ວຍເຫຼືອ ວິທີ 1 |
|---|
| ຖ້ານັກສຶກສາສັງເກດເຫັນວ່າ ມີນັກຮຽນຄົນໜຶ່ງມີບັນຫາໃນການອ່ານຄຳສັບເປັນພາສາອັງກິດ, ກໍໃຫ້ຊີ້ໃສ່ຕົວອັກສອນຕ່າງໆຢູ່ໃນຄຳສັບນັ້ນ ແລ້ວໃຫ້ນັກຮຽນອ່ານອອກສຽງແຕ່ລະສຽງໃນ |

ຄຳສັບນັ້ນ. ຖ້ານັກຮຽນຍັງບໍ່ສາມາດອອກສຽງໃດເທື່ອ ໃຫ້ສະແດງທ່າທາງປະກອບຂອງສຽງນັ້ນ ເພື່ອຊ່ວຍໃຫ້ນັກຮຽນຈື່ຈຳ, ຖ້ານັກຮຽນຍັງບໍ່ສາມາດອອກສຽງໄດ້ ກໍສາທິດ ຫຼື ອອກສຽງໃຫ້ນັກຮຽນເບິ່ງຄືນ.

ການສອນສາທິດ:

- ບອກນັກສຶກສາ ຫຼື ເພື່ອນພວກເຂົາຮ່ວມງານນຳກັນ ສະແດງບົດບາດເປັນນັກຮຽນຂັ້ນ ປ 5 ຜູ້ທີ່ມີບັນຫາໃນການອ່ານຄຳສັບໃນກິດຈະກຳການອ່ານພື້ນຖານ ໃນບົດຮຽນພາສາອັງກິດ.
- ໃຫ້ນັກສຶກສາເປີດປຶ້ມແບບຮຽນພາສາອັງກິດ ບົດທີ 6. ກິດຈະກຳ 2 ( Read and match ) ໃນປຶ້ມແບບຮຽນວິຊາພາສາອັງກິດ ຂັ້ນ ປ 5. ໃນກິດຈະກຳນີ້ ນັກຮຽນຈະໄດ້ອ່ານປະໂຫຍກທີ່ແຕກຕ່າງກັນ ແລະ ຈັບຄູ່ກັບ ຮູບພາບທີ່ກົງກັບປະໂຫຍກນັ້ນ.
- ໃຫ້ນັກສຶກສາເລີ່ມກິດຈະກຳ ໂດຍເນັ້ນວ່າພວກເຂົາຈະສະແດງ ຫຼື ເຮັດຕີອ່ານຄຳສັບບໍ່ໄດ້.
- ປະຕິບັດຕາມຂັ້ນຕອນທີ່ໄດ້ຂຽນໄວ້ຂ້າງເທິງ ເພື່ອຊ່ວຍເຫຼືອເພື່ອນຮ່ວມງານຂອງນັກສຶກສາໃຫ້ສາມາດອ່ານຄຳສັບໄດ້ຢ່າງອິດສະຫຼະ.

| ວິທີການຊ່ວຍເຫຼືອ ວິທີ 2 |
|---|
| ຖ້ານັກສຶກສາສັງເກດເຫັນວ່າ ນັກຮຽນຜູ້ໃດຜູ້ໜຶ່ງບໍ່ສາມາດຂຽນຕົວອັກສອນໃດໜຶ່ງ ຫຼື ຄຳສັບໃດໜຶ່ງໃສ່ໃນປຶ້ມຂອງພວກເຂົາໄດ້ຢ່າງຖືກຕ້ອງກໍ່ໃຫ້ສາທິດການຂຽນດ້ວຍນິ້ວມື ເພື່ອສະແດງການເຄື່ອນຍ້າຍຂອງນິ້ວມືຈາກຈຸດນີ້ໄປຫາຈຸດນັ້ນໃນການສະກົດຕົວອັກສອນ. ຈາກນັ້ນກໍໃຫ້ນັກຮຽນເຮັດດ້ວຍຕົນເອງ ໃນຂະນະທີ່ນັກສຶກສາອະທິບາຍແຕ່ລະການເຄື່ອນຍ້າຍ.<br>ການສອນສາທິດ:<br>➢ ບອກນັກສຶກສາ ຫຼື ເພື່ອນພວກເຂົາສະແດງບົດບາດເປັນນັກຮຽນຂັ້ນ ປ 5 ຜູ້ທີ່ມີບັນຫາໃນການຂຽນຕົວອັກສອນລົງໃສ່ປຶ້ມຕົນເອງໄດ້ຢ່າງຖືກຕ້ອງ.<br>➢ ໃຫ້ນັກສຶກສາເປີດໄປບົດຮຽນ 8, ກິດຈະກຳ 4 ( Write ) ປຶ້ມແບບຮຽນ ພາສາອັງກິດ ຂັ້ນ ປ 5 ໃນກິດຈະການີ້ ນັກຮຽນຈະຕ້ອງໄດ້ຂຽນປະໂຫຍກເພື່ອພັນລະນາຮູບພາບ.<br>➢ ໃຫ້ນັກສຶກສາເລີ່ມກິດຈະກຳ ໂດຍເນັ້ນວ່າ ພວກເຂົາຈະສະແດງ ຫຼື ເຮັດຕີຂຽນຕົວອັກສອນບໍ່ຖືກຕ້ອງ.<br>➢ ປະຕິບັດຕາມຂັ້ນຕອນທີ່ໄດ້ຂຽນໄວ້ຂ້າງເທິງ ເພື່ອຊ່ວຍເຫຼືອໝູ່ເພື່ອນໃຫ້ສາມາດຂຽນຕົວອັກສອນໄດ້ຢ່າງຖືກຕ້ອງ. |

| ວິທີການຊ່ວຍເຫຼືອ ວິທີ 3 |
|---|
| ຖ້ານັກສຶກສາສັງເກດເຫັນວ່າໃນກິດຈະກຳການສື່ສານ ມີນັກຮຽນຜູ້ໃດຜູ້ໜຶ່ງບໍ່ສາມາດນຳໃຊ້ພາສາທີ່ຮຽນມານັ້ນໄດ້ຢ່າງຖືກຕ້ອງ ກໍໃຫ້ຄູ່ຂອງເຂົາເຈົ້າຊ່ວຍເຫຼືອເຊິ່ງກັນ ແລະ ກັນ.ຖ້າຄູ່ |

ຂອງພວກເຂົາບໍ່ສາມາດຊ່ວຍເຫຼືອກັນໄດ້ ກໍ່ຊ່ວຍເຮັດເປັນແບບຢ່າງໃນການກວດຄືນປະໂຫຍກຂອງນັກຮຽນຜູ້ນັ້ນໃຫ້ຖືກຕ້ອງ ແລ້ວໃຫ້ພວກເຂົາເຮັດຄືນຫຼາຍໆເທື່ອ.

ການສອນສາທິດ:

- ບອກນັກສຶກສາ ຫຼື ເພື່ອນພວກເຂົາ ສະແດງບົດບາດເປັນນັກຮຽນຂັ້ນ ປ 5 ຜູ້ທີ່ມີບັນຫາໃນການນໍາໃຊ້ຄໍາສັບໃນກິດຈະກໍາການສື່ສານຢ່າງຖືກຕ້ອງ.
- ໃຫ້ນັກສຶກສາເປີດປຶ້ມແບບຮຽນ ພາສາອັງກິດ, ບົດທີ 8, ກິດຈະກໍາ 2 ( Speak ) ປຶ້ມແບບຮຽນ ພາສາອັງກິດ ຂັ້ນ ປ 5 ໃນກິດຈະກໍານີ້ ນັກຮຽນຈະຕ້ອງໄດ້ຖາມ ແລະ ຕອບກ່ຽວກັບຮູບພາບໃນປຶ້ມແບບຮຽນ.
- ໃຫ້ນັກສຶກສາເລີ່ມກິດຈະກໍາ ໂດຍເນັ້ນວ່າ ພວກເຂົາວ່າ ພວກເຂົາຈະສະແດງ ຫຼື ເຮັດຕົນໍາໃຊ້ໂຄງສ້າງບໍ່ຖືກຕ້ອງ.
- ປະຕິບັດຕາມຂັ້ນຕອນທີ່ໄດ້ຂຽນໄວ້ຂ້າງເທິງ ເພື່ອຊ່ວຍເຫຼືອໝູ່ເພື່ອນຂອງຕົນໃຫ້ສາມາດຂຽນຕາມໂຄງສ້າງໄດ້ຢ່າງຖືກຕ້ອງ.

## 2.2 ການປະເມີນເພື່ອສະຫຼຸບຜົນການຮຽນ

ໃນແຕ່ລະພາກຂອງວິຊາພາສາອັງກິດ ຂັ້ນ ປ 5 ແມ່ນມີ 4 ເກມການປະເມີນແບບຮູບຣິກ. 1 ເກມການປະເມີນຕໍ່ 1 ບົດ,ໃນ 4 ເກມດັ່ງກ່າວແມ່ນຈະໄດ້ລົງເລິກທັກສະທີ່ແຕກຕ່າງກັນຄື:

| | |
|---|---|
| ບົດຮຽນທີ 1 st ຂອງພາກ | ເກມການປະເມີນແບບຮູບຣິກແມ່ນປະເມີນຄວາມສາມາດຂອງນັກຮຽນໃນທັກສະການເວົ້າ. |
| ບົດຮຽນທີ 2 nd ຂອງພາກ | ເກມການປະເມີນແບບຮູບຣິກແມ່ນປະເມີນຄວາມສາມາດຂອງນັກຮຽນໃນທັກສະການຟັງ. |
| ບົດຮຽນທີ 3 rd ຂອງພາກ | ເກມການປະເມີນແບບຮູບຣິກແມ່ນປະເມີນຄວາມສາມາດຂອງນັກຮຽນໃນທັກສະການຂຽນ |
| ບົດຮຽນທີ 4 th ຂອງພາກ | ເກມການປະເມີນແບບຮູບຣິກແມ່ນປະເມີນຄວາມສາມາດຂອງນັກຮຽນໃນທັກສະການອ່ານ. |

ໃນຕອນຕົ້ນຂອງປີ ໃຫ້ແບ່ງນັກຮຽນອອກເປັນສອງກຸ່ມປະເມີນຄື: ກຸ່ມ 1 ແລະ ກຸ່ມ 2 .ໃນເດືອນທໍາອິດໃຫ້ປະເມີນນັກຮຽນ ກຸ່ມ 1 ໃນບົດຮຽນ 1 ແລະ 3 ຂອງພາກ ແລະ ກຸ່ມ 2 ຈະໄດ້ປະເມີນໃນບົດຮຽນທີ 2 ແລະ 4.ໃນເດືອນຕໍ່ມາກໍສັບກັນລະຫວ່າງສອງກຸ່ມນັ້ນ ຕົວຢ່າງ ກຸ່ມ 1 ຈະໄດ້ປະເມີນໃນບົດຮຽນທີ 2 ແລະ 4 ແລະ ກຸ່ມ 2 ຈະໄດ້ປະເມີນໃນບົດຮຽນໃນບົດຮຽນທີ 1 ແລະ 3. ຕ້ອງຮັບປະກັນວ່າ ຈຸດນີ້ແມ່ນໄດ້ເຮັດກັບນັກຮຽນໝົດທຸກຄົນຕະຫຼອດສົກຮຽນໃນສີ່ທັກສະຢ່າງເທົ່າທຽມກັນ.

ໃຫ້ປະຕິບັດຕາມຄໍາແນະນໍາໃນການຄິດໄລ່ຄະແນນຈາກການປະເມີນເປັນຄະແນນຣຸກຣິກ ແລ້ວມາປ່ຽນເປັນຄະແນນສ່ວນ 10 ເຊິ່ງຈະຊ່ວຍໃຫ້ນັກສຶກສາ ສາມາດຄິດໄລ່ມາເປັນຄະແນນປະຈໍາເດືອນ.

**ຕົວຢ່າງ: ການປະເມີນເພື່ອສະຫຼຸບຜົນການຮຽນ**

ໃຫ້ນັກສຶກສາອ່ານຂໍ້ຄວາມລຸ່ມແລ້ວ ແລະ ສຶກສາເກນການປະເມີນໃຫ້ຄະແນນ ແລ້ວໃຫ້ຄະແນນຕາມເກນທີ່ກຳນົດໄວ້ໃນປື້ມຄູ່ມື ເມື່ອໃຫ້ຄະແນນຮູບຣິກແລ້ວປ່ຽນເປັນຄະແນນສ່ວນ 10

ເດືອນ ຕຸລາ

ອາທິດ 1 - ພາກ 2, ບົດທີ 5, ຊົ່ວໂມງ 1 Activity 2 ( ການຟັງ-ການຮັບຮູ້ຄຳສັບ )

|  ນັກຮຽນ ກ ໄດ້ຍິນ... |  ນັກຮຽນ ກ ຊີ້... |
|---|---|
| 1. Blackboard |  |
| 2. Rubber |  |
| 3. Poster |   |
| 4. Ruler |  |
| 5. Pencil case |  |
| 6. Notebook |  |
| ຄະແນນຮູບຣິກຂອງນັກຮຽນ ກ: | /10 |

ອາທິດ 3- ພາກ 2, ບົດທີ 7, ຊົ່ວໂມງທີ 3, ກິດຈະກຳ 6 ( ການຂຽນ )




| | |
|---|---|
| ຄະແນນຣູບຣິກ: | / 10 |
| ຄະແນນນັກຮຽນ ກ ເດືອນ ຕຸລາ : | |

ເດືອນ ພະຈິກ

ອາທິດ 2- ພາກ 3, ບົດທີ 10, ຊົ່ວໂມງ 3, ກິດຈະກຳ 9 ( ການເວົ້າ-ການນຳໃຊ້ໄວຍາກອນໃນການເວົ້າ )

ນັກຮຽນ ກ : it is ( ຢຸດຊົ່ວຄາວ ) a male ?

ນັກຮຽນ ຂ : yes, it is.

ນັກຮຽນ ກ : ( ຢຸດຊົ່ວຄາວ ) is she ( ຢຸດຊົ່ວຄາວ ) is he tall ?

ນັກຮຽນ ຂ : yes. He is.

ນັກຮຽນ ກ : is ( ຢຸດຊົ່ວຄາວ ) he ( ຢຸດຊົ່ວຄາວ )
Moukda’s uncle?

ນັກຮຽນ ຂ : No he is not.



| | |
|---|---|
| ຄະແນນຮູບຮີກຂອງນັກຮຽນ ຂ: | / 10 |

ອາທິດ 4 - ພາກ 3, ບົດທີ 12 ( ການອ່ານ )

“The go…is at home” ນັກຮຽນເວົ້າ.
ຄູຊີ້ໄປໃສ່ໂຕ “t ” ໃນຄາວ່າ ‘goat’ ແລະ ເວົ້າວ່າ,
” ເຮົາອອກສຽງນີ້ແນວໃດ?” ໃນຂະນະຖາມຄູກໍ່ສະແດງທ່າທາງ
ຕົວ “t ” .

“ຈິ່ແລ້ວ! Goat. The goat ( pause ) is (pause )
At… “ ນັກຮຽນເວົ້າ.

ຄຳສັບສຸດທ້າຍນີ້ແມ່ນຫຍັງ, ຄູເວົ້າພ້ອມທັງຊີ້ໃສ່ຄຳວ່າ”home” ໃນປຶ້ມແບບຮຽນ.

“h…., h… ບໍ່ຮູ້ນາຍຄູ “ ນັກຮຽນເວົ້າ.

“home” ຄູເວົ້າ. “ບາດນີ້, ລອງອ່ານຄຳສັບຢູ່ຂໍ້ 3 ເບິ່ງໄດ້ບໍ່?”

“ I ( ຢຸດຊົ່ວຄາວ ) c…., c… “ ນັກຮຽນເວົ້າ,

“Can “ ຄູເວົ້າ.

“ I can ( ຢຸດຊົ່ວຄາວ ) See ( ຢຸດຊົ່ວຄາວ ) a r …., r…”

“ Red “ ຄູເວົ້າ.

“ a red kite ( ຢຸດຊົ່ວຄາວ ) in ( ຢຸດຊົ່ວຄາວ ) the sky “ .



| | |
|---|---|
| ຄະແນນຮູບຮີກຂອງນັກຮຽນ ຂ: | / 10 |

ຄະແນນນັກຮຽນ ຂ ເດືອນ ພະຈິກ :

## 3. ການວັດ ແລະ ປະເມີນຜົນ

### 3.1 ຄຳຖາມ ຖືກ / ຜິດ

ຄຳແນະນຳ

- ຄູຈະອ່ານປະໂຫຍກ ເຊິ່ງເປັນປະໂຫຍກກ່ຽວກັບການວັດ ແລະ ປະເມີນຜົນ ໃນຫຼັກສູດປະຖົມ ສະບັບປັບປຸງໃໝ່. ໃຫ້ນັກສຶກສາຢືນເປັນຮູບວົງມົນ ແລະ ຟັງຜະໂຫຍກດັ່ງກ່າວ.
- ຖ້ານັກສຶກສາຄິດວ່າ ເປັນປະໂຫຍກທີ່ຖືກໃຫ້ຍົກມືຂຶ້ນ ແຕ່ຖ້ານັກສຶກສາຄິດວ່າເປັນປະໂຫຍກທີ່ຜິດໃຫ້ໂຢະເຂົ່າລົງ. ເຊິ່ງມີປະໂຫຍກດັ່ງນີ້:

1. ການປະເມີນເພື່ອສະຫຼຸບຜົນການຮຽນ ຊ່ວຍໃຫ້ພວກເຮົາຮູ້ວ່າ ນັກຮຽນຕ້ອງການ ການຊ່ວຍເຫຼືອເພີ່ມເຕີມ ເພື່ອໃຫ້ບັນລຸຈຸດປະສົງຂອງບົດຮຽນ. ( **ຜິດ** ການປະເມີນເພື່ອສະຫຼຸບຜົນການຮຽນຊ່ວຍເຮົາຮູ້ວ່ານັກຮຽນສາມາດບັນລຸຈຸດປະສົງຂອງບົດຮຽນໄດ້ແນວໃດ ).
2. ຄູບໍ່ຄວນໃຫ້ການຊ່ວຍເຫຼືອນັກຮຽນ ຖ້າມັນເປັນສິ່ງທີ່ຈະແຈ້ງແລ້ວວ່າ ຈຸດນີ້ຕ້ອງເປັນການປະເມີນເພື່ອປັບປຸງການຮຽນ ເນື່ອງຈາກວ່າບໍ່ເປັນທຳກັບນັກຮຽນຜູ້ອື່ນໆ ( **ຜິດ** ເຫດຜົນທີ່ເປັນການປະເມີນເພື່ອປັບປຸງການຮຽນນັ້ນແມ່ນເພື່ອຮູ້ໄດ້ວ່າ ຄູຄວນໃຫ້ການຊ່ວຍເຫຼືອນັກຮຽນຄົນໃດເປັນພິເສດ ເພື່ອຮັບປະກັນວ່ານັກຮຽນທັງໝົດນັ້ນສາມາດບັນລຸຈຸດປະສົງຂອງບົດຮຽນ).
3. ການສອບເສັງປະຈຳເດືອນຖືກແທນດ້ວຍການປະເມີນແບບຮູກຣິກ ( **ຖືກ** )
4. ໃນຂັ້ນ ປ 5 ມີເກນຮູບຣິກໜຶ່ງເກນຕໍ່ໜຶ່ງບົດສອນ ( **ຜິດ** ພາສາລາວມີເກນປະເມີນແບບຮູບຣິກ 4 ເກນໃນທຸກໆບົດ ແຕ່ລາຍວິຊາອື່ນໆແມ່ນມີໜຶ່ງເກນ).
5. ໃນວິຊາພາສາອັງກິດ ເກນປະເມີນແບບຮູບຮູກແມ່ນປະເມີນຄວາມສາມາດຂອງນັກຮຽນໃນ 4 ທັກສະທີ່ແຕກຕ່າງກັນໃນ 4 ບົດຮຽນ ( **ຖືກ** ).
6. ສຳລັບທຸກໆວິຊາຍົກເວັ້ນວິຊາ ພາສາລາວ ຄູຕ້ອງໄດ້ປ່ຽນຄະແນນຮູບຣິກຂອງນັກຮຽນມາເປັນຄະແນນສ່ວນ 10 ( **ຖືກ** ).
7. ທັງສອງຄະແນນ ທີ່ເປັນຄະແນນສ່ວນ 10 ຂອງນັກຮຽນ ຈາກສອງກິດຈະກຳການປະເມີນທີ່ໄດ້ເຮັດໃນເດືອນ ສາມາດຄິດໄລ່ເປັນຄະແນນປະຈຳເດືອນ ( **ຖືກ** ).
8. ເພື່ອຄິດໄລ່ຄະແນນສ່ວນ 10 ໃນວິຊາພາສາລາວ ຄູຕ້ອງໄດ້ບວກຄະແນນຈາກການປະເມີນສາມຄັ້ງໃນໜຶ່ງບົດຮຽນ ( **ຜິດ** ຄູຈະໄດ້ບວກຄະແນນທີ່ໄດ້ຈາກການປະເມີນສີ່ຄັ້ງໃນໜຶ່ງບົດຮຽນ ເພື່ອຄິດໄລ່ເປັນຄະແນນສ່ວນ 10 )

## 4. ການວັດ ແລະ ປະເມີນຜົນ ວິຊາ ວິທະຍາສາດ ແລະ ສິ່ງແວດລ້ອມຊັ້ນປະຖົມສຶກສາປີທີ 4

### 4.1 ການປະເມີນເພື່ອປັບປຸງການຮຽນ

ຈຸດປະສົງຂອງການວັດ ແລະ ປະເມີນຜົນເພື່ອປັບປຸງການຮຽນຈາກ ນັກຮຽນ ( ເພື່ອກວດຄືນຄວາມກ້າວໜ້າຂອງນັກຮຽນ ແລະ ບອກໄດ້ຈຸດທີ່ນັກຮຽນຕ້ອງການ ການຊ່ວຍເຫຼືອເພີ່ມເຕີມ ເພື່ອໃຫ້ບັນລຸໄດ້ຈຸດປະສົງຂອງບົດຮຽນ.

ໃນວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ວິທີການ ຖາມຄຳຖາມແມ່ນໜຶ່ງໃນວິທີທີ່ສຳຄັນໃນການປະເມີນເພື່ອປັບປຸງຜົນການຮຽນ ແລະ ການຖາມຄຳຖາມມີຫຼາກຫຼາຍວິທີທີ່ຄູສາມາດຖາມນັກຮຽນໄດ້.

ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ແມ່ນມີ 3 ວິທີການຊ່ວຍເຫຼືອປະເມີນ ເພື່ອປັບປຸງການຮຽນທີ່ຄູສອນສາມາດນຳໃຊ້ ເພື່ອຊ່ວຍເຫຼືອນັກຮຽນ ຜູ້ທີ່ຄູຮູ້ວ່າ ພວກເຂົາຕ້ອງການ ການຊ່ວຍເຫຼືອເພີ່ມເຕີມ ເຊິ່ງມີດັ່ງນີ້:

ວິທີ 1 - ການສ້າງຄຳຖາມຕາມຄຳສັບຢູ່ໝາກກະລ່ອກ





ການກະກຽມ:

- ກະກຽມໝາກກະລ່ອກຕາມຮູບຂ້າງເທິງ ແລະ ຂຽນ 6 ຄຳສັບລຸ່ມນີ້ໃສ່ໝາກກະລ່ອກແຕ່ລະໜ້າ.
    - ເປັນຫຍັງ
    - ເມື່ອໃດ
    - ຢູ່ໃສ
    - ເຮັດແນວໃດ
    - ແມ່ນຫຍັງ
    - ສາມາດ
- ໃຊ້ກາວ / ກາລັບເຟີ້ / ສະກອັດ ຕິດໝາກກະລ່ອກແຕ່ລະຂ້າງເຂົ້າກັນ.

ການສອນສາທິດ :

- ບອກນັກສຶກສາເບິ່ງບົດຮຽນໃນປຶ້ມແບບຮຽນວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ບົດທີ 12, ແລະ ດຳເນີນການສອນໃນຂັ້ນ ຝຶກປະຕິບັດ ແລະ ນຳໃຊ້ ຊົ່ວໂມງທີ 2 ຂອງບົດດັ່ງກ່າວ. ໃນກິດຈະກຳນີ້ນັກຮຽນຈະໄດ້ຄົ້ນຄວ້າກ່ຽວກັບສັດ, ລະບົບການຫາຍໃຈ ແລະ ບ່ອນອາໄສຂອງມັນ.
- ໃຫ້ນັກສຶກສາຈິນຕະນາການວ່າພວກເຂົາໄດ້ຕື່ມຕາຕະລາງທີ່ມີປະເພດສັດຕ່າງໆ, ລະບົບຫາຍໃຈຂອງມັນ ແລະ ທີ່ຢູ່ອາໄສຂອງມັນໃນປຶ້ມແບບຮຽນສຳເລັດແລ້ວ, ຕອນນີ້ແມ່ນ ກຳລັງຖາມຄຳຖາມດ້ວຍໝາກກະລ້ອກ.
- ນັກສຶກສາປ່ຽນກັນໂຍນໝາກກະລ້ອກ ແລະ ຖາມຄຳຖາມນັກສຶກສາຄົນອື່ນ. ຖ້ານັກສຶກສາຖາມບໍ່ຖືກ, ໃຫ້ພະຍາຍາມຖາມຄຳຖາມເຈາະຈົ້ມເພື່ອນຳທາງໃຫ້ໄດ້ຄຳຄອບທີ່ຖືກຕ້ອງ.

ວິທີ 2 - ຖາມຄຳຖາມຖືກ / ຜິດ

| |
|---|
| ການສອນສາທິດ :<br>➢ ໃຫ້ນັກສຶກສາສວມບົດບາດເປັນນັກຮຽນຂັ້ນ ປ 5 ທີ່ມີບັນຫາກ່ຽວກັບການຈັດປະເພດ ຄວາມຄິດຂອງພວກເຂົາ.<br>➢ ໃຫ້ນັກສຶກສາເບິ່ງປຶ້ມແບບຮຽນວິຊາ ວິທະຍາສາດ ແລະ ສິ່ງແວກລ້ອມ ຂັ້ນ ປ 5 ບົດທີ 26 ໃນກິດຈະກຳນີ້ນັກຮຽນຕ້ອງໄດ້ອ່ານກ່ຽວກັບວົງຈອນຂອງຄາບອນ ແລະ ອາຍແກັດເຮືອນ ແກ້ວໃນໂລກ.<br>➢ ໃຫ້ນັກສຶກສາຈິນຕະນາການວ່າພວກເຂົາອ່ານບົດອ່ານສຳເລັດແລ້ວຕອນນີ້ ຄູ ຕ້ອງການ ກວດຄືນຄວາມເຂົ້າໃຈຂອງນັກຮຽນກ່ຽວກັບບົດອ່ານດັ່ງກ່າວ.<br>➢ ອ່ານເນື້ອໃນບົດຮຽນແລ້ວສ້າງເປັນຄຳຖາມ ເຊິ່ງບາງຂໍ້ຄວາມຄວນເປັນຂໍ້ຄວາມທີ່ຖືກ ແລະ ບາງຂໍ້ຄວາມຄວນເປັນຂໍ້ຄວາມທີ່ຜິດ. ຫຼັງຈາກອ່ານຈົບແຕ່ລະປະໂຫຍກໃຫ້ນັກສຶກສາຍ້າຍໄປ ທາງເບື້ອງຂວາຂອງຫ້ອງຖ້າພວກເຂົາຄິດວ່າຂໍ້ຄວາມນັ້ນຖືກ ແລະ ຍ້າຍໄປເບື້ອງຊ້າຍຖ້າຄິດວ່າ ຂໍ້ຄວາມນັ້ນຜິດ. ຖ້າຂໍ້ຄວາມນັ້ນຜິດ ຫຼື ນັກສຶກສາຕອບໂດຍຍ້າຍໄປເບື້ອງທີ່ຜິດ, ໃຫ້ຖາມຄຳ ຖາມເຈາະຈີ້ມຕື່ມວ່າຍ້ອນຫຍັງຂໍ້ຄວາມຈິ່ງຜິດ / ຍ້ອນຫຍັງນັກສຶກສາຈິ່ງຜິດໂດຍຖາມຄຳ ຖາມນຳທາງ. |
| ວິທີ 3 - ການກວດເບິ່ງສິ່ງທີ່ນັກຮຽນຮູ້ກ່ອນແລ້ວ |
| ການສອນສາທິດ:<br>➢ ບອກນັກສຶກສາສວມບົດບາດເປັນນັກຮຽນຂັ້ນ ປ. 5 ທີ່ມີບັນຫາກ່ຽວກັບການຈັດປະເພດ ຄວາມຄິດຂອງພວກເຂົາ<br>➢ ບອກນັກສຶກສາເບິ່ງປຶ້ມແບບຮຽນວິຊາ ວິທະຍາສາດ ແລະ ສິ່ງແວດລ້ອມຂັ້ນ ປ . 5 ບົດທີ 16. ໃນບົດຮຽນນີ້ນັກຮຽນຈະໄດ້ຮຽນກ່ຽວກັບການລຳລຽງນ້ຳ ແລະ ແຮ່ທາດໃນພືດ.<br>➢ ຖາມຄຳຖາມທີ່ຂຽນຢູ່ໃນປຶ້ມຄູ່ມືຄູຂັ້ນນຳເຂົ້າສູ່ບົດຮຽນ ຊົ່ວໂມງທີ 1 ຂອງບົດນີ້.<br>➢ “ ນັກຮຽນ” ສາມາດຕອບຄຳຖາມຂອງຄູໄດ້ດີປານໃດ ? ຖ້າມີຫຼັກຖານໃນຕອນຕົ້ນຂອງ ບົດຮຽນ ແລ້ວວ່າ ນັກຮຽນບາງຄົນມີຄວາມຮູ້ກ່ຽວກັບຫົວຂໍ້ໃນບົດນີ້ແລ້ວ, ຄູຈະນຳໃຊ້ຄວາມ ຮູ້ເຫຼົ່ານີ້ຂອງນັກຮຽນແນວໃດ ເພື່ອເປັນຂໍ້ມູນໃນການສອນ ? |

**4.2.ການວັດ ແລະ ປະເມີນຜົນເພື່ອສະຫຼຸບຜົນການຮຽນວິຊາ ວິທະຍາສາດ ແລະ ສິ່ງແວດລ້ອມ.**

ວິຊາ ວິທະຍາສາດ ແລະ ສິ່ງແວດລ້ອມຂັ້ນ ປ 5 ແຕ່ລະບົດແມ່ນມີໜຶ່ງເກນປະເມີນແບບຮູບຣິກ ສາມາດເບິ່ງໄດ້ໃນພາກ II ຂອງເນື້ອໃນບົດສອນ.

ໃນຕອນຕົ້ນຂອງປີ ໃຫ້ແບ່ງກຸ່ມນັກຮຽນອອກເປັນສອງກຸ່ມປະເມີນຄື: ກຸ່ມ 1 ແລະ ກຸ່ມ 2 . ມີ 4 ບົດຮຽນ ວິທະຍາສາດ ແລະ ສິ່ງແວດລ້ອມທີ່ຈະໄດ້ສອນໃນໜຶ່ງເດືອນ. ກຸ່ມ 1 ຈະໄດ້ປະເມີນໃນ ບົດຮຽນທີ 1 ແລະ 3 ຂອງພາກ ແລະ ກຸ່ມ 2 ຈະໄດ້ປະເມີນໃນບົດຮຽນທີ 2 ແລະ 4 ໃນເດືອນນັ້ນໆ.

ໃຫ້ປະຕິບັດຕາມຄຳແນະນຳໃນການຄິດໄລ່ຄະແນນຈາກການປະເມີນເປັນຄະແນນຣູກຣິກ ແລ້ວມາປ່ຽນເປັນຄະແນນສ່ວນ 10 ເຊິ່ງຈະຊ່ວຍໃຫ້ນັກສຶກສາ ສາມາດຄິດໄລ່ມາເປັນຄະແນນປະຈຳ ເດືອນ.

**ຕົວຢ່າງ: ການປະເມີນເພື່ອສະຫຼຸບຜົນການຮຽນ**

ໃຫ້ນັກສຶກສາອ່ານຂໍ້ຄວາມລຸ່ມແລ້ວ ແລະ ສຶກສາເກນການປະເມີນໃຫ້ຄະແນນ ແລ້ວໃຫ້ຄະແນນຕາມເກນທີ່ກຳນົດໄວ້ໃນປຶ້ມຄູ່ມືຄູ ເພື່ອໃຫ້ຄະແນນຮູບຣິກແລ້ວປ່ຽນເປັນຄະແນນສ່ວນ 10.

| | |
|---|---|
| ເດືອນ ຕຸລາ | |
| ອາທິດ 1 - ບົດທີ 5 | |
|  | |
| ຄະແນນຮູບຣິກ: | / 10 |
| ເດືອນ ຕຸລາ | |
| ອາທິດ 3 - ບົດທີ 7 | |

ຄູ: ຈະເກີດຫຍັງຂຶ້ນ ຖ້ານັກຮຽນຢູ່ໃກ້ຄົນທີ່ຕິດພະຍາດໂຄວິດ-19 ແລະ ບໍ່ໃສ່ຜ້າອັດປາກ ?
ນັກຮຽນຈະເຮັດແນວໃດກັບເຫດການດັ່ງກ່າວນີ້ ?
ນັກຮຽນ: ພວກເຮົາອາດຕິດພະຍາດໂຄວິດ, ພວກເຮົາຕ້ອງປ້ອງກັນຕົນເອງດ້ວຍການໃສ່ຜ້າອັດປາກ.
ຄູ: ນັກຮຽນຈະປ້ອງກັນຕົນເອງດ້ວຍວິທີໃດໄດ້ອີກແດ່ ?
ນັກຮຽນ : ພວກເຮົາຄວນໝັ່ນລ້າງມືດ້ວຍສະບູ, ບໍ່ຈັບປາກ, ດັງ ແລະ ຮັກສາໄລຍະຫ່າງ.



| | |
|---|---|
| ຄະແນນຣູບຣິກ : | / 10 |
| ຄະແນນນັກຮຽນ ສໍາລັບເດືອນ ຕຸລາ | |